ວຽກງານການວາງແຜນນຳໃຊ້ທີ່ດິນ ມີຜົນຕໍ່ຊີວິດການເປັນຢູ່ຂອງປະຊາຊົນຄືແນວໃດ? ກໍລະນີສຶກສາ ເມືອງໂພນໄຊ, ແຂວງຫຼວງພະບາງ, ສປປລາວ

ບຸນຖະໜອມ ບົວຫອມ [1], Jeremy BOURGOIN [3]
Guillaume LESTRELIN [2], Jean-Christophe Castella [2,4]

[1]NAFRI, ສູນຄົ້ນຄວ້າ ນະໂຍບາຍ ກະສິກຳ ແລະ ປ່າໄມ້-ນະຄອນຫຼວງວຽງຈັນ, ສປປລາວ.
[2]CIFOR, ສູນຄົ້ນຄວ້າ ປ່າໄມ້ນາໆຊາດ, ບ໊ໍ, ປະເທດອິນໂດເນເຊຍ.
[3]ຄະນະພູມມີສາດ, ການວາງແຜນ ແລະ ຄຸ້ມຄອງສິ່ງແວດລ້ອມ, ມະຫາວິທະຍາໄລຄຼີນແລນ, ປະເທດອົດສະຕ່າລີ.
[4]IRD, ສະຖາບັນ ຄົ້ນຄວ້າ ເພື່ອການພັດທະນາ, ປະເທດຝຣັ່ງ.

ພາຍໃຕ້ການຮ່ວມມືກັບທາງໂຄງການ ພັດທະນາລະບົບນິເວດກະສິກຳ (TABI, SDC)

ປະຫວັດຄວາມເປັນມາ

ວຽກງານວາງແຜນນຳໃຊ້ທີ່ດິນ ແລະ ມອບດິນມອບປ່າ (LUP/LA) ໄດ້ລິເລີ່ມຈັດຕັ້ງປະຕິບັດ ໃນຊ່ວງຊຸມປີ 1990.

ເພື່ອເປັນການເພີ່ມການຖືຄອງທີ່ດິນ, LUP/LA ຄາດວ່າ

- ຢຸດຕິການຖາງປ່າເຮັດໄຮ່ແບບເລື່ອນລອຍ
- ປົກປັກຮັກສາຊັບພະຍາກອນປ່າໄມ້
- ສົ່ງເສີມຊາວກະສິກອນທຳການຜະຫຼິດສຸມ
- ພັດທະນາການລ້ຽງຫົມ ແລະ ການຄ້າຜົນ
- ຜະຫຼິດກະສິກຳ

ເຖິງຢ່າງໃດກໍ່ຕາມ, ຄວາມຫຼາກຫຼາຍທາງດ້ານການສຶກສາ ການຈັດຕັ້ງປະຕິບັດ LUP/LA ໃນລາວ ແມ່ນຍັງບໍ່ທັນໄດ້ບັນລຸຜົນເທົ່າທີ່ຄວນ ຄືດັ່ງທີ່ເຈົ້າໜ້າທີ່ພາຍໃນທ້ອງຖິ່ນຄາດຫວັງໄວ້.

ພາບທີ1. ແຜນທີ່ການວາງແຜນນຳໃຊ້ທີ່ດິນ

ຈຸດປະສົງສຶກສາ

ວິເຄາະຜົນກະທົບນະໂຍບາຍ LUP/LA ຕໍ່ຊີວິດການເປັນຢູ່ຂອງປະຊາຊົນພາຍໃນເມືອງໂພນໄຊ



ແຜນພາບ1. ເຂດສຶດສາຄົ້ນຄວ້າ

ຕາຕະລາງ 1. ການສົມທຽບຂໍ້ມູນບ້ານ

ການເຂົ້າເຖິງ	+ ⟶ −				
ຊື່ບ້ານ	**ບ້ານນ້ຳບໍ່**	ບ້ານຫ້ວຍລຸ່ງເທິງ	ບ້ານດອນ ໄຊ	**ບ້ານສົບ ເຈ້ຍ**	ບ້ານຫົວ ເມືອງ
LUP/LA	2008	2008	2008	1999	2008
ຈຳນວນຄອບຄົວ	85	96	76	57	-
ເນື້ອທີ່ລວມບ້ານ (ເຮັກຕາ)	1880	1638	1545	1127	1126
ສັດສ່ວນເນື້ອທີ່ທຳການຜະຫຼິດ (ເຮັກຕາ)	1277 [68%]	1263 [77%]	1098 [71%]	1031 [91%]	823 [73%]
ດິນທີ່ນຳໃຊ້ (ເຮັກຕາ/ຄອບຄົວ)	15	13	14	18	-

ຕາຕະລາງ2. ສັງລວມ LUP/LA

LUP/LA	ຊົນເຜົ່າ	ລັກສະນະ	ຜົນກະທົບທາງດ້ານບວກ	ຜົນກະທົບຈາກການວາງແຜນນຳໃຊ້ທີ່ດິນ	ຜົນກະທົບຈາກການມອບດິນມອບປ່າ
ບ້ານສົບເຈ້ຍ 1999	ລາວລຸ່ມ, ຂະມຸ	-ຈຳກັດໃນການເຂົ້າ ເຖິງຕະຫຼາດ - ອາໃສການເຮັດໄຮ່ເຂົ້າ ເປັນຫຼັກ	ປະຊາຊົນມີຄວາມພຶງພໍໃຈທີ່ໄດ້ມີຂອບເຂດຊາຍແດນ ແລະ ໄດ້ຮັບໃບນຳໃຊ້ທີ່ດິນ (ມີຄວາມພູມໃຈໃນສິດເປັນເຈົ້າຂອງທີ່ດິນ)	ຊີວິດການເປັນຢູ່ບໍ່ມີຫຍັງປ່ຽນແປງຫຼາຍ ⇒ບໍ່ມີການເຂັ້ມງວດຕໍ່ເນື້ອທີ່ທຳການຜະຫຼິດ (ສະແດງໃນຕາຕະລາງ) ⇒LUP ໄດ້ແຈກຢາຍເນື້ອທີ່ດິນນຳໃຊ້ທີ່ປະ ຊາຊົນມີຢູ່ກ່ອນແລ້ວ	ດິນ 4 ຕອນ/ຄອບຄົວ -ຈຳກັດເນື້ອທີ່ປ່າເລົ່າໝູນວຽນ -ຄຸນນະພາບຂອງດິນເຊື່ອມໂຊມ **ຂໍ້ສົມມຸດຖານ**: ປະຊາຊົນມີດິນທຳການຜະຫຼິດຫຼາຍກ່ວາ ທີ່ເຂົາຈັບຈອງ (ດິນທີ່ບໍ່ໄດ້ຂຶ້ນທະບຽນ) ເພື່ອຫຼີກລ່ຽງບັນ ຫາການຂາດເຂົ້າກິນ.
ບ້ານນ້ຳບໍ່ 2008	ມ້ົງ, ຂະມຸ	-ສະດວກໃນການເຂົ້າ ເຖິງຕະຫຼາດ - ການປູກພືດເປັນສິນຄ້າ, ເຮັດນາ ແລະ ປູກໄມ້ ເປັນຫຼັກ			'ການມີສ່ວນຮ່ວມ' ການມອບດິນ ແມ່ນຂຶ້ນກັບຄວາມ ອາດສາມາດຂອງແຕ່ລະຄອບຄົວ ໃນການເຈລະຈາຕໍ່ ລອງ, ຊຶ່ງເປັນການສ້າງຄວາມບໍ່ເທົ່າທຽມກັນ. **ຂໍ້ສົມມຸດຖານ**: ຊໍ້ເສຍຂອງປະຊາຊົນ ທີ່ອາດເຄີຍສະສົມ ພື້ນທີ່ທຳການຜະຫຼິດ ນອນທີ່ບໍ່ໄດ້ຈັບຈອງໄວ້.

ການປຶກສາໂອ້ລົມ

ການຈັດຕັ້ງປະຕິບັດງານ LUP/LA ພາຍໃນ ທ໊ອງຖິ່ນ ປະກົດວ່າບໍ່ໄດ້ມີການປັບປຸງແກ່ໄຂຫຍັງ ຫຼາຍພຽງແຕ່ ໄດ້ຮັບຜົນຈາກ ບພະຍາກອນທີ່ອຳນວຍ ແລະ ຕະຫຼາດເຂົ້າເຖິງ.

ຜົນຈາກການສຶກສາຄົ້ນຄວ້າ ສາມາດສົມທຽບໄດ້ດັ່ງນີ້:
1. ການປ່ຽນແປງການພັດທະນາກົດຂໍ້ບັງຄັບ
2. ຜູ້ຈັດຕັ້ງປະຕິບັດນະໂຍບາຍທີ່ດິນຮອບຮ້ອມປະສົບການ ຈາກພື້ນທີ່ສຶກສາຄົ້ນຄວ້າ ເພື່ອ ນຳມາເປັນບົດຮຽນ ໃຫ້ການຈັດຕັ້ງປະຕິບັດໃນປະຈຸບັນ ໃຫ້ສາມາດດັດປັບໄດ້ຕາມສະພາບ ຕົວຈິງ ແລະ ເນັ້ນການມີສ່ວນຮ່ວມຫຼາຍຂຶ້ນ.

ພາບທີ2. ການປະຊຸມວຽກງານວາງແຜນນຳໃຊ້ທີ່ດິນ

ພາບທີ3. ບ້ານນ້ຳບໍ່

ຂະບວນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ

ສຳລັບການວິເຄາະຂໍ້ມູນໃນຕໍ່ໜ້າ ຈະໄດ້ເກັບກຳຂໍ້ມູນທາງດ້ານປະເດັນ ແລະ ປະເມີນຜົນກະທົບ ຂອງນະ ໂຍບາຍ LUP/LA ທີ່ມີຕໍ່ຊີວິດການເປັນຢູ່ຂອງປະຊາຊົນພາຍໃນທ້ອງຖິ່ນ ທີ່ພົວພັນເຖິງສະພາບລວມຂອງ ບ້ານ (ຄວາມສາມາດໃນການເຂົ້າເຖິງ, ປະເດັນທາງດ້ານຊົນເຜົ່າ ແລະ ອື່ນໆ).